ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ | ເລກທີ 2037 /ອຄ.ຫຄວ

ນະຄອນຫຼວງວຽງຈັນ, ວັນທີ 28 ຕຸລາ 2014.

ກະຊວງອຸດສາຫະກຳ ແລະ ການຄ້າ
ກົມແຜນການ ແລະ ການຮ່ວມມື
ຂາເຂົ້າ ເລກທີ 4217
ວັນທີ 3.11.14

# ແຈ້ງການ

ເຖິງ:
- ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ
- ສະພາການຄ້າ ແລະ ອຸດສາຫະກຳ, ສະມາຄົມ ຫລື ກຸ່ມທຸລະກິດ
- ປະຊາຊົນລາວບັນດາເຜົ່າ

ເລື່ອງ: ທຸລະກິດ ທີ່ບໍ່ຈຳເປັນຕ້ອງແຈ້ງຂຶ້ນທະບຽນວິສາຫະກິດ

ບົນພື້ນຖານເນື້ອໃນ ຈິດໃຈວັກສອງ ມາດຕາ 14(ປັບປຸງ) ຂອງກົດໝາຍວ່າດ້ວຍວິສາຫະກິດ (ສະບັບປັບປຸງ-2013 ແນໃສ່: ດ້ານໜຶ່ງ - ສ້າງເງື່ອນໄຂສະດວກໃຫ້ປະຊາຊົນລາວບັນດາເຜົ່າ ກ້າ ແລະ ຮຽນຮູ້ໃນການປະກອບທຸລະກິດດ້ວຍຕົນເອງ (ຈາກນ້ອຍ ໄປຫາໃຫຍ່), ສ້າງແນວຄິດຮູ້ຈັກຄ້າ ຮູ້ຈັກຂາຍ ແລະ ດ້ານສອງ - ສ້າງວຽກເຮັດງານທຳ ສ້າງລາຍໄດ້ ຫຼຸດຜ່ອນຄວາມທຸກຍາກເທື່ອລະກ້າວ, ກະຊວງອຸດສາຫະກຳ ແລະ ການຄ້າ ແຈ້ງມາຍັງພາກສ່ວນທີ່ກ່ຽວຂ້ອງ ໂດຍສະເພາະແມ່ນປະຊາຊົນລາວບັນດາເຜົ່າ ຊາບ ແລະ ຈັດຕັ້ງປະຕິບັດ ດັ່ງນີ້:

1. ທຸລະກິດທີ່ບໍ່ຈຳເປັນຕ້ອງແຈ້ງຂຶ້ນທະບຽນວິສາຫະກິດ ມີດັ່ງນີ້:

1.1. ເສດຖະກິດຄອບຄົວໃນດ້ານການຜະລິດກະສິກຳ ແລະ ຫັດຖະກຳ

ເສດຖະກິດຄອບຄົວໃນດ້ານການຜະລິດກະສິກຳ ແລະ ຫັດຖະກຳ ທີ່ໃຊ້ແຮງງານຂອງສະມາຊິກຄອບຄົວຕົນເອງ ໂດຍບໍ່ຈ້າງແຮງງານບຸກຄົນພາຍນອກ ເວັ້ນເສັຍແຕ່ລະບຽບກົດໝາຍກຳນົດເປັນຢ່າງອື່ນ.

ສະມາຊິກຄອບຄົວ ໝາຍເຖິງ ພໍ່ແມ່, ຜົວ ຫລື ເມຍ, ອ້າຍເອື້ອຍນ້ອງຄີງ ຂອງຜົວ ຫລື ເມຍ ແລະ ລູກຂອງເຈົ້າຂອງຄອບຄົວ ຫລື ລູກຂອງອ້າຍເອື້ອຍນ້ອງຄີງ ທີ່ມີຊື່ໃນສຳມະໂນຄົວດຽວກັນ ຫຼື ທີ່ອາໃສຢູ່ໃນຄອບຄົວດຽວກັນເກີນ ກວ່າ 5 ປີຕິດຕໍ່ກັນ (ໃນກໍລະນີບໍ່ມີປື້ມສຳມະໂນຄົວ);

1.2. ຜູ້ຄ້າຂາຍນ້ອຍ (Petty trader)

ຜູ້ຄ້າຂາຍນ້ອຍ ປະກອບດ້ວຍ: ຜູ້ດຳເນີນທຸລະກິດທີ່ມີຮ້ານຄ້າຂະໜາດນ້ອຍ, ຜູ້ຄ້າເລ, ຜູ້ຄ້າແຜງລອຍຊຶ່ງມີລາຍຮັບປົກກະຕິຕັ້ງແຕ່ 100.000 ກີບລົງມາຕໍ່ວັນ, ໃນນີ້:

- ຜູ້ຄ້າເລ ໝາຍເຖິງບຸກຄົນທີ່ນຳເອົາສິນຄ້າໄປເລາະຂາຍ ຕາມບ້ານ, ເຮືອນ ຫລື ຕາມສະຖານທີ່ສາທາລະນະ ທີ່ບໍ່ມີຫຼັກແຫຼ່ງແນ່ນອນ;

- ຜູ້ຄ້າແຜງລອຍ ໝາຍເຖິງ ບຸກຄົນທີ່ດຳເນີນທຸລະກິດຂາຍສິນຄ້າ ໂດຍມີຮ້ານຄ້າຂາຍ ຊຶ່ງເອີ້ນວ່າ: ແຜງລອຍ ແລະ ເຄື່ອນຍ້າຍຂາຍ ໃນສະຖານທີ່ໃດໜຶ່ງ.

1.3. ຜູ້ດຳເນີນທຸລະກິດບໍລິການຂະໜາດນ້ອຍ

ຜູ້ດຳເນີນທຸລະກິດບໍລິການຂະໜາດນ້ອຍ ແມ່ນບຸກຄົນທີ່ດຳເນີນທຸລະກິດບໍລິການ ທີ່ມີລາຍຮັບປົກກະຕິຕັ້ງແຕ່ 100.000 ກີບລົງມາຕໍ່ວັນ ຫລື ຜູ້ດຳເນີນທຸລະກິດບໍລິການ ທີ່ໄດ້ຮັບການຍົກເວັ້ນການແຈ້ງຂຶ້ນທະບຽນວິສາຫະກິດ ຕາມລະບຽບກົດໝາຍທີ່ກ່ຽວຂ້ອງ (ຖ້າມີ).

1.4. ຜູ້ຄ້າຂາຍ ຫລື ຜູ້ດຳເນີນທຸລະກິດບໍລິການຕາມລະດູການ

ຜູ້ຄ້າຂາຍ ຫລື ຜູ້ດຳເນີນທຸລະກິດບໍລິການ ຕາມລະດູການ ໝາຍເຖິງ ບຸກຄົນທີ່ດຳເນີນທຸລະກິດຄ້າຂາຍຜະລິດຕະພັນສິນຄ້າ ຫລື ທຸລະກິດບໍລິການໃດໜຶ່ງ ເປັນບາງຄັ້ງຄາວ ບໍ່ເປັນອາຊີບສະເພາະ.

ບາງທຸລະກິດ ຕາມທີ່ກ່າວມາໃນຂໍ້ 1 ນີ້ ຕ້ອງໄດ້ແຈ້ງຂຶ້ນທະບຽນວິສາຫະກິດ ຖ້າລະບຽບກົດໝາຍກຳນົດເປັນຢ່າງອື່ນ ເຊັ່ນ: ທຸລະກິດຂາຍຢາ ຫລື ທຸລະກິດໃຫ້ບໍລິການຄຳປຶກສາ ດັ່ງນີ້ເປັນຕົ້ນ;

2. ທຸລະກິດ ຕາມທີ່ກ່າວມາໃນ ຂໍ້ 1 (1.1 ເຖິງ 1.4) ເທິງນີ້ ລ້ວນແຕ່ເປັນທຸລະກິດສະຫງວນໄວ້ສຳລັບພົນລະເມືອງລາວ. ໃນກໍລະນີລະເມີດ ຈະຖືກປະຕິບັດມາດຕະການ ຕາມລະບຽບກົດໝາຍທີ່ກ່ຽວຂ້ອງ ໂດຍສະເພາະແມ່ນ ມາດຕະການ ຕາມທີ່ບົ່ງໄວ້ໃນມາດຕາ 212 ຂອງກົດໝາຍວິສາຫະກິດ, ສະບັບປັບປຸງ-2013;

3. ທຸກການເຄື່ອນໄຫວດຳເນີນທຸລະກິດຂອງຄົນຕ່າງປະເທດ ຢູ່ ສປປ ລາວ ຕ້ອງປະຕິບັດຕາມລະບຽບກົດໝາຍທີ່ກ່ຽວຂ້ອງ ຢ່າງເຂັ້ມງວດ;

4. ຜູ້ດຳເນີນທຸລະກິດ ທີ່ບໍ່ຈຳເປັນຕ້ອງແຈ້ງຂຶ້ນທະບຽນວິສາຫະກິດ ຕາມແຈ້ງການສະບັບນີ້ ຕ້ອງປະຕິບັດ ຕາມລະບຽບກົດໝາຍທີ່ກ່ຽວຂ້ອງ ຂອງບັນດາຂະແໜງການຕ່າງໆ ເຊັ່ນ: ການເສຍພັນທະ, ການຂຶ້ນທະບຽນອາກອນ ຫລື ອອກບັດຕິດຕາມ ດັ່ງນີ້ເປັນຕົ້ນ;

5. ທຸກປະເພດທຸລະກິດ ນອກຈາກທີ່ໄດ້ກ່າວມາ ໃນແຈ້ງການສະບັບນີ້ແລ້ວ ຕ້ອງແຈ້ງຂຶ້ນທະບຽນວິສາຫະກິດ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍທີ່ກ່ຽວຂ້ອງ;

6. ປະເພດຂອງທຸລະກິດທີ່ບໍ່ຈຳເປັນຕ້ອງແຈ້ງຂຶ້ນທະບຽນວິສາຫະກິດ ຕາມແຈ້ງການສະບັບນີ້ ອາດຈະມີການປັບປຸງ ປ່ຽນແປງ ຕາມຄວາມເໝາະສົມ ໃນແຕ່ລະໄລຍະ;

7. ແຈ້ງການສະບັບນີ້ ປ່ຽນແທນແຈ້ງການ, ເລກທີ 1836/ອຄ, ລົງວັນທີ 4 ພະຈິກ 2008, ເລື່ອງ: ທຸລະກິດທີ່ບໍ່ຈຳເປັນຕ້ອງແຈ້ງຂຶ້ນທະບຽນວິສາຫະກິດ ຕາມກົດໝາຍວ່າດ້ວຍວິສາຫະກິດ.

ແຈ້ງມາເພື່ອຊາບ ແລະ ຈັດຕັ້ງປະຕິບັດ ຢ່າງເຂັ້ມງວດ.

ທ. ລັດຖະມົນຕີວ່າການກະຊວງອຸດສາຫະກຳ ແລະ ການຄ້າ;

ນາງ ຄຳມະນີ ສີຫາມວງ...